**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ນະຄອນຫຼວງວຽງຈັນ, ວັນທີ 01 ມີນາ 2022

# ປະກາດ

ເຖິງ: ບັນດາຜູ້ຖືຮຸ້ນ ແລະ ນັກລົງທຶນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ຫຼັກເກນ, ແນວທາງການຄັດເລືອກ ແລະ ຄຸນສົມບັດຂອງສະມາຊິກສະພາບໍລິຫານ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ຂໍຖືເປັນກຽດແຈ້ງກ່ຽວກັບຫຼັກເກນ, ແນວທາງການຄັດເລືອກ ແລະ ຄຸນສົມບັດຂອງສະມາຊິກສະພາບໍລິຫານຂອງບໍລິສັດເຊິ່ງມີແນວທາງການຄັດເລືອກເປັນດັ່ງນີ້:

## 1. ວັດຖຸປະສົງ

ເນື່ອງຈາກສະມາຊິກສະພາບໍລິຫານຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໃກ້ຈະສິ້ນສຸດວາລະ ບໍລິສັດຈຶ່ງກຳນົດຫຼັກເກນ, ແນວທາງການຄັດເລືອກ ແລະ ຄຸນສົມບັດຂອງສະມາຊິກສະພາບໍລິຫານເພື່ອໃຫ້ສາມາດຄັດເລືອກສະມາຊິກສະພາທີ່ມີຄຸນສົມບັດເໝາະສົມກັບທຸລະກິດຂອງບໍລິສັດ ໂດຍແນວທາງການຄັດເລືອກນີ້ຈະຖືຕາມ Good Corporate Governance ເພື່ອໃຫ້ຜູ້ທີ່ຈະເຂົ້າມາເປັນສະມາຊິກສະພາບໍລິຫານ ສາມາດເຂົ້າມາປະຕິບັດໜ້າທີ່ໄດ້ຢ່າງມີປະສິດທິພາບ

## 2. ພາລະບົດບາດຂອງສະມາຊິກສະພາບໍລິຫານ ( The Role of the Board )

ສະມາຊິກສະພາບໍລິຫານ ຈະຕ້ອງມີບົດບາດ ແລະ ໜ້າທີ່ຢ່າງນ້ອຍດັ່ງນີ້:

2.1 Providing Accountability
2.2 Strategy Formulation
2.3 Policy Making
2.4 Monitoring & Supervising
2.5 Approve and work with and through the CEO




3. **ໂຄງສ້າງຂອງສະພາບໍລິຫານ** ( Composition / Board Structure )

ໂຄງສ້າງຂອງສະມາຊິກສະພາບໍລິຫານແມ່ນໄດ້ກຳນົດຕາມຂໍ້ຕົກລົງວ່າດ້ວຍສະພາບໍລິຫານ ສະບັບເລກທີ 10/ຄຄຊ, ລົງວັນທີ 26 ເມສາ 2019 ຢ່າງໜ້ອຍມີດັ່ງນີ້:

- ສະພາບໍລິຫານມີສະມາຊິກຢ່າງໜ້ອຍ 5 ທ່ານຂຶ້ນໄປ
- ສະມາຊິກທີ່ມີສ່ວນຮ່ວມໃນການບໍລິຫານບໍ່ເກີນ 1/3 ຂອງສະມາຊິກທັງໝົດ
- ສະມາຊິກອິດສະຫຼະຕ້ອງປະກອບດ້ວຍຢ່າງໜ້ອຍ 1/3 ຂອງສະມາຊິກທັງໝົດ
- ປະທານ ແລະ ຮອງປະທານຕ້ອງບໍ່ແມ່ນສະມາຊິກທີ່ມີສ່ວນຮ່ວມໃນການບໍລິຫານ

4. **ຄຸນສົມບັດຂອງສະມາຊິກສະພາບໍລິຫານ** ( Board Membership )

ຄະນະກຳມະການຄັດເລືອກກຳນົດຄຸນສົມບັດຂອງສະມາຊິກສະພາບໍລິຫານທີ່ຖືກຕ້ອງ, ບໍ່ມີລັກສະນະຕ້ອງຫ້າມຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ແລະ ຂໍ້ຕົກລົງວ່າດ້ວຍສະພາບໍລິຫານ ສະບັບເລກທີ 10/ຄຄຊ, ລົງວັນທີ 26 ເມສາ 2019 ແລະກົດໝາຍທີ່ກ່ຽວຂ້ອງອື່ນໆ:

ຄະນະກຳມະການຄັດເລືອກ ກຳນົດຄຸນສົມບັດພື້ນຖານຂອງສະມາຊິກສະພາບໍລິຫານມີຄວາມຮູ້ ຄວາມສາມາດ ເໝາະສົມ ກັບທຸລະກິດຂອງບໍລິສັດ ຕາມ Specialist ໂດຍຖືຕາມ Knowledge, Skill, Experience ໂດຍຄວາມຮູ້ ຄວາມສາມາດ ເປັນ 2 ລະດັບ ຄື:

4.1 ມີຄວາມຮູ້ ຄວາມສາມາດເໝາະສົມກັບທຸລະກິດ ຕາມຄຸນສົມບັດພື້ນຖານ Specialist ທີ່ຈຳເປັນຕ້ອງມີ (must have) ໄດ້ແກ່:

a. ຄວາມຮູ້ຄວາມຊຳນານກ່ຽວກັບທຸລະກິດເຊົ່າສິນເຊື່ອ (Leasing business)

b. ດ້ານການເງິນການທະນາຄານ (Finance and Banking)

c. ດ້ານບັນຊີ ແລະ ກວດສອບ (Accounting and Auditing)

d. ກົນລະຍຸດທາງການຕະຫຼາດ ແລະ ການແຂ່ງຂັນ (Marketing and Strategy)

e. ດ້ານເທັກໂນໂລຢີການສື່ສານ ແລະ ນະວັດຕະກຳ (Intelligent Technology and Innovation)

f. ດ້ານປະຕິບັດການ (Operation)

g. ດ້ານກົດໝາຍ (Legal)

4.2 ມີຄວາມຮູ້ ຄວາມສາມາດເໝາະສົມກັບທຸລະກິດ ຄຸນສົມບັດພື້ນຖານຕາມ Specialist ທີ່ຄວນຈະມີ (should have) ໄດ້ແກ່:

a. ການບໍລິຫານຄວາມສ່ຽງ (Risk Management)

b. ເສດຖະກິດມະຫາພາກ ແລະ ຈຸລະພາກ (Macro and Micro Economic)

c. ບໍລິຫານງານບຸກຄະລາກອນ (Human Resources)

d. ມີຄວາມຮູ້ກ່ຽວກັບດ້ານເຕັກນິກ ຫຼື ທຸລະກິດຍານພະຫະນະ ແລະ ລົດຈັກ (Vehicle and Motorbike mechanism or business)

e. ທະຫານ/ຕຳຫຼວດ (Sodlier/Police) .

## 5. ຂະບວນການຄັດເລືອກສະມາຊິກສະພາບໍລິຫານ ( Nomination Process )

ຄະນະກຳມະການຄັດເລືອກກຳນົດຂັ້ນຕອນໃນການຄັດເລືອກໄວ້ດັ່ງນີ້:

- ຄະນະກຳມະການຄັດເລືອກພິຈາລະນາຫຼັກເກນທີ່ເໝາະສົມ ໂດຍປະກາດໃຫ້ຜູ້ຖືຮຸ້ນ ຫຼື ກຸ່ມຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືຮຸ້ນລວມກັນທັງໝົດຕັ້ງແຕ່ 5% ຂື້ນໄປມີສ່ວນຮ່ວມໃນການສະເໜີລາຍຊື່ candidate ຕັ້ງແຕ່ວັນທີ 14 - 28 ກຸມພາ 2022 ນີ້ດ້ວຍ
- ຄະນະກຳມະການຄັດເລືອກ ລວບລວມ, ຊອກຫາ ແລະ ກວດສອບຄຸນສົມບັດຂອງ candidate
- ຄະນະກຳມະການຄັດເລືອກຈັດແບ່ງລາຍຊື່ candidate ແຍກຕາມຄຸນສົມບັດພື້ນຖານຕາມຂໍ້ 4
- ຄະນະກຳມະການຄັດເລືອກ ດຳເນີນການຄັດເລືອກສະມາຊິກສະພາບໍລິຫານທີ່ເໝາະສົມເພື່ອສະເໜີໃຫ້ສະພາບໍລິຫານພິຈາລະນາກ່ອນສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງ

## 6. ໄລຍະເວລາດຳເນີນການ

- ບໍລິສັດ ຈະດຳເນີນການຄັດເລືອກສະມາຊິກສະພາບໍລິຫານທີ່ມີຄຸນສົມບັດເໝາະສົມ ເພື່ອສະເໜີໃຫ້ໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງ ພາຍໃນວັນທີ 31 ມີນາ 2022 ນີ້

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານ ເພື່ອຮັບຊາບດ້ວຍ.

ຜູ້ອຳນວຍການໃຫ່ຍ

ບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

(ທ່ານ ມານົບ ຕຣີລິດວິໄລ)